# ພິທີເປີດໂຕບໍລິການ

## ຊໍາລະເງິນຂ້າມແດນ ແລະ ຖອນເງິນສົດຜ່ານຕູ້ ATM ດ້ວຍ QR Code ລະຫວ່າງ BCEL ແລະ GLN ຢ່າງເປັນທາງການ




ໃນຕອນບ່າຍ ວັນທີ 20 ທັນວາ 2022 ທີ່ ທຄຕລ ສໍານັກງານໃຫຍ່ ໄດ້ຈັດພິທີເປີດໂຕບໍລິການຊໍາລະເງິນຂ້າມແດນ ແລະ ຖອນເງິນສົດຜ່ານຕູ້ ATM ດ້ວຍ QR Code ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ແລະ ບໍລິສັດ GLN International ສ.ເກົາຫຼີ (GLN) ຢ່າງເປັນທາງການ. ຕາງໜ້າລົງນາມໃນຄັ້ງນີ້ໂດຍ ທ່ານ ບັນທະລາດ ແກ້ວປະເສີດ ຮອງຜູ້ອໍານວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທ່ານ ຮັ່ນ ຈຸ່ນ ຊ່ອງ ຜູ້ອໍານວຍການບໍລິສັດ GLN International ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍຄະນະຈາກ ທະນາຄານແຫ່ງ ສປປ ລາວ, ຄະນະບໍລິຫານ BCEL, ຄະນະບໍລິຫານ GNL, ຄະນະຈາກ LapNet ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ການເປີດໂຕການບໍລິການຊໍາລະເງິນຂ້າມແດນ ແລະ ຖອນເງິນສົດຜ່ານຕູ້ ATM ດ້ວຍ QR Code ລະຫວ່າງ BCEL ແລະ GLN ໃນຄັ້ງນີ້ ແມ່ນເພື່ອອໍານວຍຄວາມສະດວກໃຫ້ແກ່ລູກຄ້າ (ໂດຍສະເພາະນັກທ່ອງທ່ຽວຈາກ ສ.ເກົາຫຼີ) ທີ່ເຂົ້າມາທ່ອງທ່ຽວໃນ ສປປ ລາວ ໃຫ້ສາມາດຊໍາລະຄ່າສິນຄ້າ ແລະ ບໍລິການຜ່ານ QR Code OnePay ແລະ ຖອນເງິນສົດຜ່ານຕູ້ ATM ດ້ວຍ QR Code ຢູ່ ສປປ ລາວ ໄດ້ຢ່າງສະດວກສະບາຍ ພ້ອມທັງຫຼຸດຜ່ອນການນໍາໃຊ້ເງິນສົດ, ເພີ່ມໂອກາດໃຫ້ບັນດາຮ້ານຄ້າ ແລະ ຫົວໜ່ວຍທຸລະກິດຕ່າງໆ ໂດຍສະເພາະໃນເຂດແຫຼ່ງທ່ອງທ່ຽວ ໃຫ້ສາມາດຮອງຮັບການຊໍາສະສາງດ້ວຍລະບົບທີ່ທັນສະໄໝ ເພື່ອເພີ່ມຍອດຂາຍ ແລະ ຂະຫຍາຍທຸລະກິດໃຫ້ກວ້າງຂຶ້ນ.

ປະຈຸບັນມີຫຼາຍກວ່າ 100 ຮ້ານຄ້າທີ່ສາມາດຮອງຮັບການຊໍາລະບໍລິການດັ່ງກ່າວ ພິເສດແມ່ນເຂດທີ່ເປັນແຫຼ່ງທ່ອງທ່ຽວເຊັ່ນ: ນະຄອນຫຼວງວຽງຈັນ, ວັງວຽງ, ຫຼວງພະບາງ ແລະ ຍັງຄົງສືບຕໍ່ຜັນຂະຫຍາຍຈໍານວນຮ້ານຄ້າເພື່ອຮອງຮັບກັບການບໍລິການໄດ້ກວ້າງຂວາງຍິ່ງຂຶ້ນ.

ນະໂອກາດນີ້ BCEL ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນໍາໃຊ້ຜະລິດຕະພັນ ແລະ ສະໜັບສະໜູນພວກເຮົາຕະຫຼອດມາ ຫວັງຢ່າງຍິ່ງວ່າການຮ່ວມມືກັບສາກົນໃນຄັ້ງນີ້ ຈະຊ່ວຍໃຫ້ການຊໍາລະສະສາງໃນ ສປປ ລາວ ມີຄວາມສະດວກສະບາຍ ແລະ ທັນສະໄໝຫຼາຍຍິ່ງຂຶ້ນ.




ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

ຂຽນຂ່າວໂດຍ: ນາງ ເຕືອນໃຈ ຈະເລີນສຸກ

ວິຊາການພະແນກການຕະຫຼາດ ແລະ ບໍລິການລູກຄ້າລາຍໃຫຍ່